ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 05 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 09 APR 2025

# ຂໍ້ຕົກລົງ
# ວ່າດ້ວຍການສ້າງສະພາບຄ່ອງໃນຕະຫຼາດຫຼັກຊັບລາວ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຂໍອະນຸຍາດດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ ສະບັບເລກທີ 22/ຄຄຊ, ລົງວັນທີ 23 ມິຖຸນາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 80/ສຄຄຊ, ລົງວັນທີ 14 ມີນາ 2025.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ເງື່ອນໄຂ ແລະ ມາດຕະການ ກ່ຽວກັບ ການຂໍອະນຸຍາດສ້າງສະພາບຄ່ອງ ໃນຕະຫຼາດຫຼັກຊັບລາວ ເພື່ອເປັນບ່ອນອີງ ໃນການເຄື່ອນໄຫວສ້າງສະພາບຄ່ອງຂອງຮຸ້ນໃນຕະຫຼາດຫຼັກຊັບລາວ ແນໃສ່ຊຸກຍູ້ໃຫ້ທຸລະກຳການຊື້ ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ມີສະພາບຄ່ອງຫຼາຍຂຶ້ນ ແລະ ເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ກວດສອບໄດ້.

### ມາດຕາ 2 ການສ້າງສະພາບຄ່ອງ

ການສ້າງສະພາບຄ່ອງ ແມ່ນ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ດ້ວຍການນຳໃຊ້ທຶນ ຫຼື ຮຸ້ນ ຂອງຕົນເອງ ແລະ/ຫຼື ຂອງ ບໍລິສັດຈົດທະບຽນ ເພື່ອດຳເນີນການຊື້ ຂາຍຮຸ້ນໃນ ຕະຫຼາດຫຼັກຊັບລາວ ເຮັດໃຫ້ຮຸ້ນດັ່ງກ່າວ ເກີດມີການຊື້ ຂາຍຫຼາຍຂຶ້ນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັນຍາວ່າດ້ວຍການສ້າງສະພາບຄ່ອງ** ໝາຍເຖິງ ສັນຍາລະຫວ່າງ ບໍລິສັດຫຼັກຊັບ ກັບ ຕະຫຼາດຫຼັກຊັບ;

2. **ສັນຍາວ່າດ້ວຍການສະໜອງສະພາບຄ່ອງ** ໝາຍເຖິງ ສັນຍາລະຫວ່າງ ບໍລິສັດຫຼັກຊັບ ກັບ ບໍລິສັດຈົດທະບຽນ;

3. **ການສະໜອງສະພາບຄ່ອງ** ໝາຍເຖິງ ການນຳໃຊ້ທຶນຂອງບໍລິສັດຈົດທະບຽນ ເພື່ອສ້າງສະພາບຄ່ອງໃຫ້ແກ່ຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ.

**ມາດຕາ 4 ຫຼັກການການສ້າງສະພາບຄ່ອງ**

ການສ້າງສະພາບຄ່ອງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຖືກຕ້ອງ, ໂປ່ງໃສ ແລະ ກວດສອບໄດ້;
3. ປ້ອງກັນການຊື້ ຂາຍຫຼັກຊັບທີ່ບໍ່ຍຸຕິທຳ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການເຄື່ອນໄຫວວຽກງານການສ້າງສະພາບຄ່ອງ ແລະ ສະໜອງສະພາບຄ່ອງ ໃນຕະຫຼາດຫຼັກຊັບລາວ.

## ໝວດທີ 2
## ການອະນຸຍາດເປັນຜູ້ສ້າງສະພາບຄ່ອງ

**ມາດຕາ 6 ຜູ້ສ້າງສະພາບຄ່ອງ**

ຜູ້ສ້າງສະພາບຄ່ອງຕາມຂໍ້ຕົກລົງສະບັບນີ້ ແມ່ນ ບໍລິສັດຫຼັກຊັບ ທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດຫຼັກຊັບ ປະເພດ ຜູ້ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 7 ເງື່ອນໄຂການອະນຸຍາດເປັນ ຜູ້ສ້າງສະພາບຄ່ອງ**

ການສະເໜີຂໍເປັນຜູ້ສ້າງສະພາບຄ່ອງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນສະມາຊິກຂອງຕະຫຼາດຫຼັກຊັບລາວ;

2. ເປັນບໍລິສັດຫຼັກຊັບ ທີ່ມີນັກວິຊາຊີບທຸລະກິດຫຼັກຊັບປະເພດຜູ້ຄ້າຫຼັກຊັບ ເພື່ອຮັບຜິດຊອບວຽກງານການສ້າງສະພາບຄ່ອງ;

3. ໄດ້ຮັບການອະນຸມັດຈາກ ສະພາບໍລິຫານຂອງບໍລິສັດຫຼັກຊັບ ໃນການເຄື່ອນໄຫວເປັນ ຜູ້ສ້າງສະພາບຄ່ອງ ແລະ ຜູ້ສະໜອງສະພາບຄ່ອງ;

4. ມີຄວາມສ່ຽງດ້ານຄວາມໝັ້ນຄົງທາງການເງິນ (Prudential Risk) ຢູ່ໃນລະດັບຕ່ຳ ຕາມຜົນການປະເມີນຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນໄລຍະໜຶ່ງປີຄືນຫຼັງ;

5. ມີລະບົບເຕັກໂນໂລຊີຂໍ້ມູນ-ຂ່າວສານ ທີ່ຜ່ານການທົດສອບຂອງ ຕະຫຼາດຫຼັກຊັບລາວ;

6. ເປັນບໍລິສັດທີ່ບໍ່ຢູ່ໃນໄລຍະຖືກ ໂຈະ, ຍຸບເລີກ ຫຼື ລົ້ມລະລາຍ ຫຼື ຢູ່ໃນໄລຍະການຄວບກິດຈະການ;

7. ເອກະສານລາຍງານການເງິນຂອງ ບໍລິສັດຫຼັກຊັບ ຕ້ອງໄດ້ຮັບການກວດສອບຈາກ ບໍລິສັດກວດສອບທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕ້ອງເປັນຄໍາເຫັນແບບບໍ່ມີເງື່ອນໄຂ;

8. ເງື່ອນໄຂອື່ນຕາມການກໍານົດໃນຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ກໍລະນີ ບໍລິສັດຫຼັກຊັບ ທີ່ເປັນຜູ້ສ້າງສະພາບຄ່ອງ ຖ້າໄດ້ຮັບການສະໜອງທຶນຈາກ ບໍລິສັດຈົດທະບຽນ ເພື່ອສະໜອງສະພາບຄ່ອງໃຫ້ຮຸ້ນຂອງບໍລິສັດຈົດທະບຽນດັ່ງກ່າວ ຕ້ອງມີສັນຍາວ່າດ້ວຍການສະໜອງສະພາບຄ່ອງ. ສໍາລັບ ບໍລິສັດຈົດທະບຽນ ທີ່ຈະເຮັດສັນຍາວ່າດ້ວຍການສະໜອງສະພາບຄ່ອງກັບ ບໍລິສັດຫຼັກຊັບ ຕ້ອງເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ຮຸ້ນຂອງບໍລິສັດດັ່ງກ່າວ ຕ້ອງໄດ້ມີການຊື້ ຂາຍຢ່າງເປັນປົກກະຕິ.

### ມາດຕາ 8 ເອກະສານປະກອບ

ເອກະສານປະກອບການສະເໜີຂໍອະນຸຍາດເປັນ ຜູ້ສ້າງສະພາບຄ່ອງ ມີດັ່ງນີ້:

1. ສໍາເນົາໃບອະນຸຍາດດໍາເນີນທຸລະກິດຫຼັກຊັບ;
2. ເອກະສານການແຕ່ງຕັ້ງ ຜູ້ຄ້າຫຼັກຊັບ ທີ່ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ປະເພດຜູ້ຄ້າຫຼັກຊັບ ຢ່າງໜ້ອຍ 1 ຄົນ ເພື່ອຮັບຜິດຊອບວຽກງານການສ້າງສະພາບຄ່ອງ;
3. ສໍາເນົາສັນຍາວ່າດ້ວຍການສະໜອງທຶນໃນການສ້າງສະພາບຄ່ອງ ລະຫວ່າງ ບໍລິສັດຫຼັກຊັບ ກັບບໍລິສັດຈົດທະບຽນ ກໍລະນີ ໄດ້ຮັບທຶນຈາກ ບໍລິສັດຈົດທະບຽນ;
4. ບົດລາຍງານຈາກ ຕະຫຼາດຫຼັກຊັບ ກ່ຽວກັບຜົນການທົດສອບລະບົບກ່ຽວກັບການເຄື່ອນໄຫວເປັນຜູ້ສ້າງສະພາບຄ່ອງ;
5. ເອກະສານອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

### ມາດຕາ 9 ການພິຈາລະນາ

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາເອກະສານປະກອບການຂໍເປັນຜູ້ສ້າງສະພາບຄ່ອງ ພາຍໃນເວລາ 15 ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຕອບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈໍາເປັນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ພາຍຫຼັງທີ່ ໄດ້ຮັບການອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລ້ວ ບໍລິສັດຫຼັກຊັບ ຕ້ອງໄປຂຶ້ນທະບຽນເພື່ອເຄື່ອນໄຫວເປັນ ຜູ້ສ້າງສະພາບຄ່ອງນໍາ ຕະຫຼາດຫຼັກຊັບລາວ ພ້ອມທັງ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງຂອງ ຕະຫຼາດຫຼັກຊັບລາວ ວາງອອກຢ່າງເຂັ້ມງວດ.

## ໝວດທີ 3
## ສິດ ແລະ ໜ້າທີ່ຂອງ ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນ

### ມາດຕາ 10 ສິດ ແລະ ໜ້າທີ່ ຂອງຕະຫຼາດຫຼັກຊັບລາວ

ຕະຫຼາດຫຼັກຊັບລາວ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຕະຫຼາດຫຼັກຊັບ (ສະບັບປັບປຸງ). ນອກຈາກນັ້ນ, ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ສ້າງລະບຽບການ ແລະ ຄູ່ມື ກ່ຽວກັບການຄຸ້ມຄອງການເຄື່ອນໄຫວອຽກງານການ ສ້າງສະພາບຄ່ອງ ແລະ ຜູ້ສະໜອງສະພາບຄ່ອງ ໃນຕະຫຼາດຫຼັກຊັບລາວ;

2. ສ້າງ, ພັດທະນາກົນໄກ ແລະ ລະບົບຕ່າງໆທີ່ກ່ຽວຂ້ອງ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວອຽກງານການ ສ້າງສະພາບຄ່ອງ ທີ່ໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

3. ຄົ້ນຄວ້າການກຳນົດນະໂຍບາຍໃນການສົ່ງເສີມ ການສ້າງສະພາບຄ່ອງ ເປັນຕົ້ນ: ການຫຼຸດ ຫຼື ຍົກເວັ້ນ ຄ່າທຳນຽມໃນການຊື້ ຂາຍຫຼັກຊັບ ແລະ ນະໂຍບາຍອື່ນໆຕາມຄວາມເໝາະສົມ;

4. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນ ກ່ຽວກັບການເຄື່ອນໄຫວຂອງ ຜູ້ສ້າງສະພາບຄ່ອງ ແລະ ຜູ້ສະໜອງສະພາບຄ່ອງ ໃນຕະຫຼາດຫຼັກຊັບລາວ;

5. ຂຶ້ນທະບຽນ, ໂຈະ ແລະ ຖອນ ກ່ຽວກັບການຂຶ້ນທະບຽນເປັນ ຜູ້ສ້າງສະພາບຄ່ອງ;

6. ເປີດເຜີຍຂໍ້ມູນກ່ຽວກັບ ການຂຶ້ນທະບຽນໃຫ້ບໍລິສັດຫຼັກຊັບ ເປັນຜູ້ສ້າງສະພາບຄ່ອງ ຜ່ານຊ່ອງການການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ແລະ ພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ;

7. ລາຍງານການ ຕິດຕາມ, ກວດກາ ແລະ ຜົນການປະເມີນ ກ່ຽວກັບການສ້າງສະພາບຄ່ອງ ປະຈຳໄຕມາດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບຊາບ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ 15 ວັນລັດຖະການ ຂອງໄຕມາດຖັດໄປ (ສຳລັບ ເນື້ອໃນຂອງການລາຍງານ ໃຫ້ປະຕິບັດຕາມເນື້ອໃນແບບຟອມການລາຍງານທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ);

8. ລາຍງານຂໍ້ມູນກະທັນຫັນ ໃນກໍລະນີພົບເຫັນພຶດຕິກຳໃດໜຶ່ງທີ່ຂັດກັບຂໍ້ຫ້າມ ຕາມທີ່ກຳນົດໄວ້ໃນ ມາດຕາ 15 ຂອງ ຂໍ້ຕົກລົງສະບັບນີ້;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງກຳນົດໄວ້.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍ ການຂໍອະນຸຍາດດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ (ສະບັບປັບປຸງ). ນອກຈາກນັ້ນ, ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ເຊັນສັນຍາ ການສ້າງສະພາບຄ່ອງ ຮ່ວມກັບ ຕະຫຼາດຫຼັກຊັບລາວ ແລະ ບໍລິສັດຈົດທະບຽນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ເນື້ອໃນຂອງສັນຍາຕາມທີ່ໄດ້ກຳນົດໄວ້ໃນ ປະມວນກົດໝາຍແພ່ງ (ຮ່າງສັນຍາຄັດຕິດມາພ້ອມນີ້);

2. ດຳເນີນການ ສ້າງສະພາບຄ່ອງ ໂດຍການສົ່ງຄຳສັ່ງສະເໜີລາຄາ ໃຫ້ສອດຄ່ອງຕາມລະບຽບການຂອງ ຕະຫຼາດຫຼັກຊັບລາວ ກຳນົດ;

3. ລາຍງານການ ປ່ຽນແປງ ຜູ້ຮັບຜິດຊອບການ ສ້າງສະພາບຄ່ອງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ນັບແຕ່ວັນທີ່ມີການປ່ຽນເປັນຕົ້ນໄປ;

4. ລາຍງານ ກ່ຽວກັບການເຄື່ອນໄຫວ ແລະ ການເຮັດທຸລະກຳການສ້າງສະພາບຄ່ອງ ປະຈຳເດືອນ ພາຍໃນ 10 ວັນ ຂອງເດືອນຖັດໄປ ແລະ ປະຈຳປີ ພາຍໃນ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີເປັນຕົ້ນໄປ;

5. ເປີດເຜີຍຂໍ້ມູນກ່ຽວກັບ ການໄດ້ຮັບການຂຶ້ນທະບຽນໃຫ້ເປັນຜູ້ສ້າງສະພາບຄ່ອງ ຜ່ານຊ່ອງການການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ແລະ ພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ;

6. ເຄື່ອນໄຫວເຮັດໜ້າທີ່ເປັນຜູ້ສ້າງສະພາບຄ່ອງດ້ວຍຄວາມສັດຊື່ບໍລິສຸດ;

7. ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງກັບອຽກງານການສ້າງສະພາບຄ່ອງ ແລະ ການສະໜອງສະພາບຄ່ອງ ຕາມການກຳນົດຂອງ ຕະຫຼາດຫຼັກຊັບລາວ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງກຳນົດໄວ້.

**ມາດຕາ 12 ສິດ ແລະ ໜ້າທີ່ຂອງບໍລິສັດຈົດທະບຽນ**

ບໍລິສັດຈົດທະບຽນ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ເຊັນສັນຍາ ການສະໜອງທຶນເພື່ອສ້າງສະໜອງສະພາບຄ່ອງ ຮ່ວມກັບ ບໍລິສັດຫຼັກຊັບ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ຕາມເນື້ອໃນຂອງສັນຍາຕາມທີ່ກຳນົດໄວ້ໃນ ປະມວນກົດໝາຍແພ່ງ (ຮ່າງສັນຍາຄັດຕິດມາພ້ອມນີ້);

2. ຕິດຕາມການປະຕິບັດໜ້າທີ່ຂອງ ຜູ້ສ້າງສະພາບຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນສັນຍາວ່າດ້ວຍການສະໜອງສະພາບຄ່ອງ ທີ່ໄດ້ເຊັນຮ່ວມກັນ;

3. ໃຫ້ຂໍ້ມູນແກ່ ຕະຫຼາດຫຼັກຊັບລາວ ເມື່ອພົບເຫັນວ່າ ຜູ້ສ້າງສະພາບຄ່ອງ ຫາກບໍ່ປະຕິບັດ ຫຼື ຂາດຕົກບົກພ່ອງໃນການປະຕິບັດໜ້າທີ່ສ້າງສະພາບຄ່ອງ ຕາມທີ່ໄດ້ກຳນົດໃນສັນຍາ;

4. ລາຍງານ ແລະ ເປີດເຜີຍຂໍ້ມູນ ທີ່ກ່ຽວຂ້ອງກັບການສ້າງສະພາບຄ່ອງ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງກຳນົດໄວ້.

## ໝວດທີ 4
## ການໂຈະ, ການຖອນໃບອະນຸຍາດ ແລະ ຂໍ້ຫ້າມ

**ມາດຕາ 13 ການໂຈະການເປັນຜູ້ສ້າງສະພາບຄ່ອງ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງໂຈະການເປັນ ຜູ້ສ້າງສະພາບຄ່ອງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຂາດເງື່ອນໄຂໃດໜຶ່ງຕາມການກຳນົດໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;

2. ໄດ້ຮັບການອະນຸຍາດ ແລະ ຂຶ້ນທະບຽນເປັນ ຜູ້ສ້າງສະພາບຄ່ອງ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;

3. ບໍລິສັດຫຼັກຊັບ ຖືກໂຈະການດຳເນີນທຸລະກິດ ຫຼື ຖືກຖອນໃບອະນຸຍາດດຳເນີນທຸລະກິດຫຼັກຊັບ;

4. ບໍ່ປະຕິບັດສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;

5. ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້;

6. ໂຈະໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ການໂຈະ ຈະຖືກຍົກເລີກ ກໍຕໍ່ເມື່ອ ຜູ້ສ້າງສະພາບຄ່ອງ ສາມາດແກ້ໄຂບັນຫາທີ່ຖືກໂຈະໄດ້ສຳເລັດ.

**ມາດຕາ 14 ການຖອນໃບອະນຸຍາດເປັນຜູ້ສ້າງສະພາບຄ່ອງ**

ຜູ້ສ້າງສະພາບຄ່ອງ ຈະຖືກຖອນ ໃບອະນຸຍາດ ໃນກໍລະນີໃດໜຶ່ງ ລຸ່ມນີ້:

1. ບໍ່ສາມາດແກ້ໄຂກໍລະນີທີ່ຖືກໂຈະໄດ້ ໂດຍບໍ່ມີເຫດຜົນພຽງພໍ ຕາມກອບເວລາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ;

2. ຖືກຖອນການຂຶ້ນທະບຽນ ຈາກຕະຫຼາດຫຼັກຊັບລາວ;

3. ບໍລິສັດຫຼັກຊັບ ບໍ່ໄດ້ດຳເນີນ ປະເພດທຸລະກິດຫຼັກຊັບ ເປັນ ນາຍໜ້າຊື້ ຂາຍຫຼັກຊັບ, ຖືກຍຸບເລີກ ຫຼື ລົ້ມລະລາຍ;

4. ສິ້ນສຸດອາຍຸການຂຶ້ນທະບຽນ ແລະ ບໍ່ມີການຕໍ່ອາຍຸຕາມທີ່ກຳນົດໄວ້ໃນ ລະບຽບການສະເພາະຂອງ ຕະຫຼາດຫຼັກຊັບລາວ;

5. ລະເມີດກົດໝາຍ ແລະ ລະບຽບການກ່ຽວຂ້ອງອື່ນທີ່ສ້າງຜົນເສຍຫາຍ ແລະ ມີຜົນກະທົບຕໍ່ວົງກວ້າງໃນຂົງເຂດວຽກງານຫຼັກຊັບ.

**ມາດຕາ 15 ຂໍ້ຫ້າມ**

ບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນ ທີ່ເຄື່ອນໄຫວວຽກງານກ່ຽວກັບການ ສ້າງສະພາບຄ່ອງ ມີພຶດຕິກຳໃດໜຶ່ງ ຕາມກຳນົດໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 146, 147, 148, 149, 150, 151, 171, 173, 179 ແລະ 180 ນອກຈາກນັ້ນ ຍັງຫ້າມບໍ່ໃຫ້ມີພຶດຕິກຳ ໃດໜຶ່ງ ດັ່ງນີ້:

1. ຫ້າມຜູ້ສ້າງສະພາບຄ່ອງໃນຕະຫຼາດຫຼັກຊັບລາວ ສົ່ງຄຳສັ່ງສະເໜີລາຄາໃນກໍລະນີໃດໜຶ່ງລຸ່ມນີ້:

- ເມື່ອມີພຽງການສະເໜີລາຄາຊື້ແຕະຂອບເຂດລາຄາສູງສຸດຂອງມື້ ຫຼື ມີພຽງການສະເໜີລາຄາຂາຍແຕະຂອບເຂດລາຄາຕໍ່າສຸດຂອງມື້;
- ລະບົບຄອມພິວເຕີຂອງ ຕະຫຼາດຫຼັກຊັບລາວ ແລະ ສະມາຊິກຂອງ ຕະຫຼາດຫຼັກຊັບລາວ ເກີດມີບັນຫາຂັດຂ້ອງ;
- ການແຈ້ງໂຈະການຊື້ ຂາຍຫຼັກຊັບຈາກ ຕະຫຼາດຫຼັກຊັບລາວ ຕໍ່ກັບຫຼັກຊັບທີ່ຕົນ ສ້າງສະພາບຄ່ອງ.

2. ບໍ່ປະຕິບັດການລາຍງານຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ມີພຶດຕິການອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 16 ນະໂຍບາຍຕໍ່ຜູ້ມີຜົນງານ**

ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານການສ້າງສະພາບຄ່ອງ ແລະ ສະໜອງສະພາບຄ່ອງ ໃນຕະຫຼາດຫຼັກຊັບລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ**

ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານການສ້າງສະພາບຄ່ອງ ແລະ ສະໜອງສະພາບຄ່ອງ ໃນຕະຫຼາດຫຼັກຊັບລາວ ທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ຂໍ້ຕົກລົງວ່າດ້ວຍການປະຕິບັດມາດຕະການທາງບໍລິຫານ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານການສ້າງສະພາບຄ່ອງ ແລະ ສະໜອງສະພາບຄ່ອງ ໃນຕະຫຼາດຫຼັກຊັບລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ

ສະເຫຼີມໄຊ ກົມມະສິດ